ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 159 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 20-7-2010

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍການສະກັດກັ້ນ
ແລະ ຕ້ານເຊື້ອເອສໄອວີ/ພະຍາດເອດ.

~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 58/ສພຊ, ລົງວັນທີ 29 ມິຖຸນາ 2010 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເອສໄອວີ/ພະຍາດເອດ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 14 ກໍລະກົດ 2010.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :*

*<u>ມາດຕາ 1</u>* : ປະກາດໃຊ້ກົດໝາຍວ່າດ້ວຍ ການສະກັດກັ້ນ ແລະ ຕ້ານເຊື້ອເອສໄອວີ/ພະຍາດເອດ.

*<u>ມາດຕາ 2</u>* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ.

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ                                                    ເລກທີ 58 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ

---

- ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫລັງທີ່ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການສະກັດກັ້ນ ແລະຕ້ານເຊື້ອເຮສໄອວີ/ພະຍາດເອດ ໃນວາລະປະຊຸມຕອນບ່າຍຂອງວັນທີ 29 ມິຖຸນາ 2010,

### ກອງປະຊຸມໄດ້ຕົກລົງ:

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 29 ມິຖຸນາ 2010

ປະທານສະພາແຫ່ງຊາດ

ສະພາແຫ່ງຊາດ

ປະທານ

ທອງສິງ ທຳມະວົງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ

ເລກທີ 01 /ສພຊ

ນະຄອນຫລວງວຽງຈັນ, ວັນທີ 29 ມິຖຸນາ 2010

# ກົດໝາຍ
# ວ່າດ້ວຍການສະກັດກັ້ນ
# ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ

## ພາກທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບ ວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ, ການຄຸ້ມຄອງ, ການຕິດຕາມ, ກວດກາວຽກງານດັ່ງກ່າວໃຫ້ມີປະສິດທິຜົນ, ຫລຸດຜ່ອນການຕິດເຊື້ອເຮສໄອວີ ແລະ ເປັນພະຍາດເອດ ແນໃສ່ເຮັດໃຫ້ປະຊາຊົນລາວບັນດາເຜົ່າມີສຸຂະພາບແຂງແຮງ, ປາສະຈາກເຊື້ອເຮສໄອວີ, ສາມາດປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2. ເຊື້ອເຮສໄອວີ/ພະຍາດເອດ

ເຊື້ອເຮສໄອວີ (HIV-Human Immunodeficiency Virus) ແມ່ນ ເຊື້ອຈຸລະໂຣກເອດ ທີ່ເຂົ້າໄປທຳລາຍຈຸລັງເມັດເລືອດຂາວຂອງຄົນ ທີ່ເຮັດໜ້າທີ່ຜະລິດພູມຕ້ານທານຕໍ່ເຊື້ອພະຍາດອື່ນໆ ເສື່ອມລົງ.

ພະຍາດເອດ (AIDS - Acquired Immune Deficiency Syndrome) ແມ່ນ ອາການຂອງພະຍາດແຊກຊ້ອນຕ່າງໆ ທີ່ເກີດຂຶ້ນກັບຄົນທີ່ມີພູມຕ້ານທານເສື່ອມ ດ້ວຍເຊື້ອເຮສໄອວີເຂົ້າໄປທຳລາຍ.

**ມາດຕາ 3. ການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ**

ການສະກັດກັ້ນເຊື້ອເຮສໄອວີ/ພະຍາດເອດ ແມ່ນ ການກັນ, ການໂຄສະນາສຸຂະສຶກສາ ແລະ ການຄວບຄຸມເຊື້ອເຮສໄອວີ/ພະຍາດເອດ ເພື່ອບໍ່ໃຫ້ແຜ່ຂະຫຍາຍຢູ່ໃນສັງຄົມ.

ການຕ້ານເຊື້ອເຮສໄອວີ/ພະຍາດເອດ ແມ່ນ ການປິ່ນປົວ, ການດູແລເບິ່ງແຍງ, ການຊ່ວຍເຫຼືອ, ການອຸດໜູນ ຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ໃຫ້ມີສຸຂະພາບດີຂຶ້ນ.

**ມາດຕາ 4. ການອະທິບາຍຄຳສັບ**

ຄຳສັບຕ່າງໆທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຕິດເຊື້ອເຮສໄອວີ ໝາຍເຖິງ** ການໄດ້ຮັບເຊື້ອເຮສໄອວີເຂົ້າສູ່ຮ່າງກາຍ ໂດຍຜ່ານເສັ້ນທາງໃດໜຶ່ງ ຄື ທາງເພດສຳພັນ, ທາງເລືອດ, ທາງແມ່ຫາລູກ;
2. **ການຕິດຕໍ່ທາງເພດສຳພັນ ໝາຍເຖິງ** ການຕິດເຊື້ອເຮສໄອວີ ໂດຍຜ່ານການຮ່ວມເພດກັບຜູ້ມີເຊື້ອເຮສໄອວີ ດ້ວຍວິທີການຕ່າງໆ ທີ່ບໍ່ມີການປ້ອງກັນ;
3. **ການຕິດຕໍ່ທາງເລືອດ ໝາຍເຖິງ** ການຕິດເຊື້ອເຮສໄອວີ ຈາກເລືອດ, ຜະລິດຕະພັນເລືອດ ຫຼື ອະໄວຍະວະຕ່າງໆ ທີ່ມີເຊື້ອເຮສໄອວີ ໂດຍຜ່ານວິທີການຕ່າງໆ ເຊັ່ນ ການສົ່ງເລືອດ, ການໃຊ້ເຂັມສັກຢາ, ວັດຖຸແຫຼມຄົມຮ່ວມກັນໂດຍບໍ່ໄດ້ອະເຊື້ອ, ການໃຊ້ຢາເສບຕິດທາງເສັ້ນເລືອດ, ການປ່ຽນຖ່າຍອະໄວຍະວະ ແລະ ວິທີການອື່ນ;
4. **ການອະເຊື້ອ ໝາຍເຖິງ** ການຂ້າເຊື້ອພະຍາດດ້ວຍວິທີ ລ້າງດ້ວຍຢາຂ້າເຊື້ອ, ຕົ້ມ, ອົບ, ໜຶ້ງ ແລະ ອື່ນໆ;
5. **ການຕິດຕໍ່ຈາກແມ່ຫາລູກ ໝາຍເຖິງ** ການທີ່ລູກໄດ້ຮັບເຊື້ອເຮສໄອວີ ຈາກຜູ້ເປັນແມ່ໃນໄລຍະຖືພາ, ເວລາອອກລູກ ຫຼື ໄລຍະໃຫ້ລູກກິນນົມແມ່;
6. **ການກັນເຊື້ອເຮສໄອວີ ໝາຍເຖິງ** ການນຳໃຊ້ ວິທີການ, ມາດຕະການ ເພື່ອບໍ່ໃຫ້ຕິດເຊື້ອເຮສໄອວີ ດ້ວຍເສັ້ນທາງໃດໜຶ່ງ;
7. **ການຄວບຄຸມ ໝາຍເຖິງ** ການນຳໃຊ້ມາດຕະການຕ່າງໆ ໃນ ການຄຸ້ມຄອງ, ການຕິດຕາມ ແລະ ການກວດກາ ເພື່ອບໍ່ໃຫ້ເຊື້ອເຮສໄອວີແຜ່ຂະຫຍາຍອອກໄປສູ່ສັງຄົມ;
8. **ການເຝົ້າລະວັງ ໝາຍເຖິງ** ການຕິດຕາມ, ການເກັບກຳ ແລະ ການວິໄຈຂໍ້ມູນ ຂອງການແຜ່ລະບາດການຕິດເຊື້ອເຮສໄອວີ ຢ່າງເປັນລະບົບໃນທົ່ວສັງຄົມ ເພື່ອເປັນບ່ອນອີງໃນການວາງແຜນຕອບໂຕ້ຕໍ່ພະຍາດດັ່ງກ່າວ;
9. **ການແຜ່ລະບາດຂອງເຊື້ອເຮສໄອວີ ໝາຍເຖິງ** ການຕິດເຊື້ອເຮສໄອວີຈາກຄົນໜຶ່ງໄປສູ່ຫຼາຍຄົນ;
10. **ການປິ່ນປົວ ໝາຍເຖິງ** ການບໍລິການດ້ານການແພດ ໃຫ້ແກ່ຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ດ້ວຍການ ກວດ, ບົ່ງມະຕິ, ວາງຢາ, ຕິດຕາມ ແລະ ປະຕິບັດເຕັກນິກການແພດອື່ນ ລວມທັງການບຳບັດທາງດ້ານຈິດໃຈເພື່ອໃຫ້ສຸຂະພາບ ຂອງຜູ້ກ່ຽວດີຂຶ້ນ;

11. **ຜູ້ບໍລິການດ້ານການແພດ ໝາຍເຖິງ** ຜູ້ປະກອບວິຊາຊີບດ້ານການແພດ ຫຼື ວິຊາຊີບອື່ນ ທີ່ມີຄວາມຮູ້, ຄວາມສາມາດໃນວຽກງານດັ່ງກ່າວ ແລະ ບໍລິການ ໃຫ້ຄໍາປຶກສາ, ຄໍາແນະນໍາ, ການດູແລດ້ານຮ່າງກາຍ ແລະ ຈິດໃຈ ແກ່ຜູ້ຮັບບໍລິການ;
12. **ຜູ້ຮັບບໍລິການ ໝາຍເຖິງ** ຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ, ຜູ້ທີ່ມີຄວາມສ່ຽງ ແລະ ຜູ້ໄດ້ຮັບຜົນກະທົບທາງດ້ານຈິດໃຈ ແລະ ຮ່າງກາຍຈາກເຊື້ອເຮສໄອວີ/ພະຍາດເອດ;
13. **ກຸ່ມທີ່ມີຄວາມສ່ຽງ ໝາຍເຖິງ** ກຸ່ມຄົນທີ່ມີພຶດຕິກໍາສ່ຽງສູງຕໍ່ການຕິດເຊື້ອເຮສໄອວີ ເຊັ່ນ: ຜູ້ບໍລິການທາງເພດ, ຜູ້ຮ່ວມເພດດຽວກັນ, ຜູ້ມີເພດສໍາພັນທີ່ບໍ່ປອດໄພ, ຜູ້ໃຊ້ຢາເສບຕິດທີ່ໃຊ້ເຂັມສັກຢາຮ່ວມກັນ ໂດຍບໍ່ໄດ້ອະເຊື້ອ;
14. **ກຸ່ມເປົ້າໝາຍ ໝາຍເຖິງ** ກຸ່ມຄົນທີ່ມີຄວາມສ່ຽງຕໍ່ການຕິດເຊື້ອເຮສໄອວີ ຊຶ່ງຂະແໜງການທີ່ກ່ຽວຂ້ອງຕ້ອງໄດ້ເອົາໃຈໃສ່;
15. **ການຮັກສາຄວາມລັບ ໝາຍເຖິງ** ການບໍ່ເປີດເຜີຍຜົນການກວດເລືອດ, ການປິ່ນປົວ ແລະ ການປົກປ້ອງສິດທິສ່ວນບຸກຄົນຂອງຜູ້ຕິດເຊື້ອເຮສໄອວີ/ພະຍາດເອດ;
16. **ຜະລິດຕະພັນເລືອດ ໝາຍເຖິງ** ນໍ້າເລືອດ (Plasma) ແລະ ເມັດເລືອດນ້ອຍ (Platelet);
17. **ທາດກາຍຕ້ານ (Antibody) ໝາຍເຖິງ** ທາດຊະນິດໜຶ່ງ ທີ່ຮ່າງກາຍຜະລິດອອກມາ ເພື່ອຕ້ານສິ່ງແປກປອມທີ່ເຂົ້າໄປໃນຮ່າງກາຍ ເປັນຕົ້ນ ເຊື້ອພະຍາດຕ່າງໆ;
18. **ພູມຕ້ານທານ (Immune) ໝາຍເຖິງ** ລະບົບປ້ອງກັນຂອງຮ່າງກາຍຕໍ່ເຊື້ອພະຍາດຕ່າງໆ;
19. **ການບໍ່ຈໍາແນກ ແລະ ບໍ່ລັງກຽດ ໝາຍເຖິງ** ການບໍ່ແຍກ ຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ, ຜູ້ໄດ້ຮັບຜົນກະທົບ ໃຫ້ຢູ່ໂດດດ່ຽວ, ການບໍ່ຍ້ານກົວ, ການບໍ່ຂີ້ດຽດ ບຸກຄົນດັ່ງກ່າວ.

**ມາດຕາ 5. ນະໂຍບາຍກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ**

ລັດ ດໍາເນີນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ດ້ວຍການວາງນະໂຍບາຍ, ລະບຽບກົດໝາຍ, ການສ້າງຕັ້ງກົງຈັກການຈັດຕັ້ງ, ການປະກອບບຸກຄະລາກອນ ແລະ ການສະໜອງງົບປະມານທີ່ຈໍາເປັນ, ຢາປິ່ນປົວ ແລະ ອຸປະກອນອື່ນໆທີ່ຂາດບໍ່ໄດ້, ພ້ອມກັນນັ້ນ ລັດ ກໍຕ້ອງຊຸກຍູ້, ສົ່ງເສີມບຸກຄົນ, ຄອບຄົວ, ການຈັດຕັ້ງ ທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ເຂົ້າຮ່ວມໃນວຽກງານ ຄວບຄຸມ, ກວດກາ, ສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຢ່າງກວ້າງຂວາງ.

ລັດ ຖືສໍາຄັນ ແລະ ເອົາໃຈໃສ່ໂຄສະນາ, ສຶກສາອົບຮົມທົ່ວປວງຊົນດ້ວຍຫຼາຍຮູບການ ເພື່ອເຮັດໃຫ້ຄົນໃນສັງຄົມ ໂດຍສະເພາະກຸ່ມເປົ້າໝາຍ ແລະ ກຸ່ມທີ່ມີຄວາມສ່ຽງນັ້ນ ເຫັນໄດ້ຄວາມອັນຕະລາຍ, ຜົນກະທົບຂອງເຊື້ອເຮສໄອວີ/ພະຍາດເອດ, ມີສະຕິ, ຮູ້ວິທີກັນ ແລະ ປິ່ນປົວ ພະຍາດດັ່ງກ່າວ.

ລັດ ນໍາໃຊ້ມາດຕະການຕ່າງໆ ເພື່ອກັນການເພີ່ມຂຶ້ນຂອງການຕິດເຊື້ອເຮສໄອວີ ໃນກຸ່ມປະຊາກອນທົ່ວໄປ ແລະ ກຸ່ມເປົ້າໝາຍ ພ້ອມທັງເອົາໃຈໃສ່ປິ່ນປົວ, ດູແລເບິ່ງແຍງ ແລະ ຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ດ້ວຍຄວາມຮັບຜິດຊອບສູງ ໂດຍປາສະຈາກການຈໍາແນກ ແລະ ການລັງກຽດ.

ລັດ ສ້າງເງື່ອນໄຂ, ອຳນວຍຄວາມສະດວກໃຫ້ຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ແລະ ຜູ້ໄດ້ຮັບຜົນກະທົບ ສາມາດມີວຽກເຮັດງານທຳຕາມເງື່ອນໄຂຕົວຈິງ.

**ມາດຕາ 6. ຫຼັກການກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ**

ວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ດຳເນີນຕາມຫຼັກການພື້ນຖານ ດັ່ງນີ້:

1. ເອົາການສະກັດກັ້ນ ດ້ວຍການໂຄສະນາສຸຂະສຶກສາເປັນຕົ້ນຕໍ ເອົາການປິ່ນປົວ, ດູແລ ເບິ່ງແຍງ ແລະ ບຳບັດທາງດ້ານຈິດໃຈ ເປັນສຳຄັນ;
2. ຍົກສູງຄວາມຮັບຜິດຊອບຂອງການຈັດຕັ້ງ, ສັງຄົມ, ຊຸມຊົນ, ຄອບຄົວ ແລະ ບຸກຄົນ;
3. ຮັບປະກັນຄວາມສະເໝີພາບ, ຄວາມຍຸຕິທຳ, ມະນຸດສະທຳ, ປາສະຈາກການຈຳແນກ ແລະ ການລັງກຽດ;
4. ກວດເລືອດເພື່ອຊອກຫາການຕິດເຊື້ອເຮສໄອວີ ດ້ວຍຄວາມຕື່ນຕົວ ແລະ ສະໝັກໃຈ ຍົກເວັ້ນກໍລະນີທີ່ລະບຽບກົດໝາຍໄດ້ກຳນົດໄວ້ຢ່າງອື່ນ;
5. ຮັກສາຄວາມລັບ ແລະ ສິດທິຄວາມເປັນສ່ວນຕົວຂອງຜູ້ຕິດເຊື້ອເຮສໄອວີ.

**ມາດຕາ 7. ພັນທະກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ**

ບຸກຄົນ, ຄອບຄົວ, ການຈັດຕັ້ງທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດ ມີພັນທະເຂົ້າຮ່ວມໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ເພື່ອບໍ່ໃຫ້ແຜ່ຂະຫຍາຍ ຢູ່ໃນສັງຄົມ ໂດຍຈຳກັດ ຫຼື ບໍ່ໃຫ້ມີພຶດຕິກຳສ່ຽງ ແລະ ປັດໃຈ ທີ່ນຳໄປສູ່ການຕິດເຊື້ອເຮສໄອວີ ລວມທັງ ໃຫ້ການຮ່ວມມືໃນການປະຕິບັດກິດຈະກຳຕ່າງໆ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານດັ່ງກ່າວ.

**ມາດຕາ 8. ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ວິທະຍາສາດ, ເຕັກໂນໂລຊີ ແລະ ການຍາດແຍ່ງການສະໜັບສະໜູນດ້ານຕ່າງໆ.

## ພາກທີ II
## ຄວາມອັນຕະລາຍຂອງເຊື້ອເຮສໄອວີ/ພະຍາດເອດ

**ມາດຕາ 9. ຄວາມອັນຕະລາຍຂອງເຊື້ອເຮສໄອວີ/ພະຍາດເອດ**

ເຊື້ອເຮສໄອວີ/ພະຍາດເອດ ເປັນພະຍາດອັນຕະລາຍ ຊຶ່ງຕິດຕໍ່, ແຜ່ຂະຫຍາຍຢ່າງກວ້າງຂວາງຈາກຄົນຫາຄົນ ແລະ ສາມາດທຳລາຍຊີວິດຄົນຢ່າງຫຼວງຫຼາຍ.

ເຊື້ອເຮສໄອວີ/ພະຍາດເອດ ບໍ່ທັນມີ ຢາວັກຊີນສັກປ້ອງກັນ ແລະ ຢາປິ່ນປົວໃຫ້ຫາຍຂາດ.

ເຊື້ອເຮສໄອວີ ຈະຄົງຕົວຢູ່ໃນຮ່າງກາຍຂອງຜູ້ຕິດເຊື້ອຕະຫຼອດຊີວິດ ແລະ ມີຜົນກະທົບຕໍ່ສຸຂະພາບ, ຊີວິດ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມ.

**ມາດຕາ 10. ຜົນກະທົບຕໍ່ສຸຂະພາບ ແລະ ຊີວິດ**

ເຊື້ອເຮສໄອວີ/ພະຍາດເອດ ມີຜົນກະທົບຕົ້ນຕໍ ຕໍ່ສຸຂະພາບ ແລະ ຊີວິດຂອງຄົນ ດັ່ງນີ້:

1. ອັດຕາການເຈັບ ແລະ ການເສຍຊີວິດ ຂອງປະຊາກອນ ເພີ່ມຂຶ້ນ;
2. ການເຈັບເປັນແກ່ຍາວຍ້ອນເກີດພະຍາດແຊກຊ້ອນ;
3. ອາຍຸຍືນສະເລ່ຍຂອງປະຊາກອນ ຫຼຸດລົງ.

**ມາດຕາ 11. ຜົນກະທົບຕໍ່ເສດຖະກິດ**

ເຊື້ອເຮສໄອວີ/ພະຍາດເອດ ມີຜົນກະທົບຕົ້ນຕໍ ຕໍ່ເສດຖະກິດ ດັ່ງນີ້:

1. ລາຍຈ່າຍເຂົ້າໃນການປິ່ນປົວ, ດູແລເບິ່ງແຍງ ເພີ່ມຂຶ້ນ;
2. ແຮງງານທີ່ມີປະສິດທິພາບເພື່ອພັດທະນາ ສ້າງສາປະເທດຊາດ ຫຼຸດລົງ;
3. ຊີວິດການເປັນຢູ່ຂອງຄອບຄົວຜູ້ຕິດເຊື້ອເຮສໄອວີ/ພະຍາດເອດ ຝືດເຄືອງ;
4. ຄວາມທຸກຍາກຂອງປະຊາຊົນ ບໍ່ໄດ້ຮັບການແກ້ໄຂຕາມແຜນການທີ່ໄດ້ກຳນົດໄວ້.

**ມາດຕາ 12. ຜົນກະທົບຕໍ່ ວັດທະນະທຳ-ສັງຄົມ**

ເຊື້ອເຮສໄອວີ/ພະຍາດເອດ ມີຜົນກະທົບຕົ້ນຕໍ ຕໍ່ວັດທະນະທຳ-ສັງຄົມ ດັ່ງນີ້:

1. ເກີດການຈຳແນກ ແລະ ລັງກຽດຕໍ່ຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ແລະ ຄອບຄົວຂອງຜູ້ກ່ຽວ;
2. ເພີ່ມພາລະທາງດ້ານສະຫວັດດີການໃຫ້ແກ່ລັດ, ສັງຄົມ, ຊຸມຊົນ ແລະ ຄອບຄົວ ໃນການປິ່ນປົວ ແລະ ດູແລເບິ່ງແຍງຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ;
3. ເຮັດໃຫ້ເດັກກຳພ້າ, ກຳພອຍ ແລະ ປາກົດການຫຍໍ້ທໍ້ຕ່າງໆໃນສັງຄົມເພີ່ມຂຶ້ນ.

## ພາກທີ III
## ການສະກັດກັ້ນເຊື້ອເຮສໄອວີ/ພະຍາດເອດ

**ມາດຕາ 13. ວິທີການກັນເຊື້ອເຮສໄອວີ/ພະຍາດເອດ**

ການກັນເຊື້ອເຮສໄອວີ/ພະຍາດເອດ ເປັນວຽກງານພື້ນຖານ ແລະ ຕົ້ນຕໍ ຂອງສັງຄົມ, ຊຸມຊົນ ແລະ ຄອບຄົວ.

ການກັນເຊື້ອເຮສໄອວີ/ພະຍາດເອດ ໃຫ້ນຳໃຊ້ວິທີການ ແລະ ມາດຕະການ ຕົ້ນຕໍ ດັ່ງນີ້:

1. ການກັນດ້ວຍການໂຄສະນາ, ສຸຂະສຶກສາກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ;
2. ການກັນການຕິດເຊື້ອເຮສໄອວີ/ພະຍາດເອດ ທາງເພດສຳພັນ;
3. ການກັນການຕິດເຊື້ອເຮສໄອວີ/ພະຍາດເອດ ທາງເລືອດ;
4. ການກັນການຕິດເຊື້ອເຮສໄອວີ/ພະຍາດເອດ ຈາກແມ່ຫາລູກ;
5. ການກັນດ້ວຍການກວດເລືອດ.

**ມາດຕາ 14. ການກັນດ້ວຍການໂຄສະນາ, ສຸຂະສຶກສາກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ**

ການໂຄສະນາ, ສຸຂະສຶກສາກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ ມີ ດັ່ງນີ້:

1. ເພີ່ມທະວີການໂຄສະນາ, ສຸຂະສຶກສາກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ ໃຫ້ເຂົ້າໃຈຢ່າງກວ້າງຂວາງໃນທົ່ວສັງຄົມ ເປັນຕົ້ນ ຢູ່ໂຮງຮຽນມັດທະຍົມ, ອະຊີວະສຶກສາ, ມະຫາວິທະຍາໄລ, ຫົວໜ່ວຍແຮງງານ, ຄ້າຍຄຸມຂັງ, ຄ້າຍດັດສ້າງ, ກຸ່ມປະຊາກອນ ທີ່ມີຄວາມສ່ຽງ;
2. ດຳເນີນ ການໂຄສະນາ, ສຸຂະສຶກສາດ້ວຍຫຼາຍຮູບແບບ ເປັນຕົ້ນ ຜ່ານພາຫະນະ ສື່ມວນຊົນ ແລະ ອື່ນໆ;
3. ໃຫ້ຮູ້ຄວາມອັນຕະລາຍຂອງເຊື້ອເຮສໄອວີ/ພະຍາດເອດ, ເສັ້ນທາງຕິດຕໍ່, ວິທີກັນພະຍາດ, ການປິ່ນປົວ, ການດູແລເບິ່ງແຍງ, ການຢູ່ຮ່ວມກັນໂດຍປາສະຈາກການຈຳແນກ ແລະ ການລັງກຽດ ຕໍ່ຜູ້ຕິດເຊື້ອເຮສໄອວີ ແລະ ເປັນພະຍາດເອດ.

**ມາດຕາ 15. ການກັນການຕິດເຊື້ອເຮສໄອວີ/ພະຍາດເອດ ທາງເພດສຳພັນ**

ການກັນການຕິດເຊື້ອເຮສໄອວີ/ພະຍາດເອດ ທາງເພດສຳພັນ ໃຫ້ນຳໃຊ້ວິທີການ ແລະ ມາດຕະການ ຕົ້ນຕໍ ດັ່ງນີ້:

1. ກວດເລືອດກ່ອນແຕ່ງດອງ ດ້ວຍຄວາມຕື່ນຕົວ ແລະ ສະໝັກໃຈ;
2. ສັດຊື່ຕໍ່ຄູ່ຜົວເມຍດ້ວຍກັນ ບົນຫຼັກການ ການເປັນຜົວໜຶ່ງເມຍດຽວ;
3. ໃຊ້ຖົງຢາງອະນາໄມທຸກຄັ້ງທີ່ມີເພດສຳພັນທີ່ເຫັນວ່າບໍ່ປອດໄພ;
4. ໃຊ້ວິທີການ ແລະ ມາດຕະການ ອື່ນໆ.

**ມາດຕາ 16. ການກັນການຕິດເຊື້ອເຮສໄອວີ/ພະຍາດເອດ ທາງເລືອດ**

ການກັນການຕິດເຊື້ອເຮສໄອວີ/ພະຍາດເອດ ທາງເລືອດ ໃຫ້ນຳໃຊ້ວິທີການ ແລະ ມາດຕະການ ຕົ້ນຕໍ ດັ່ງນີ້:

1. ການບໍລິຈາກເລືອດ, ການຮັບເລືອດ, ຜະລິດຕະພັນເລືອດ ຫຼື ການປ່ຽນຖ່າຍອະໄວຍະວະ ຕ້ອງຜ່ານການກວດເລືອດທີ່ຖືກຕ້ອງ ເພື່ອຊອກຫາການຕິດເຊື້ອເຮສໄອວີ ເພື່ອຄວາມປອດໄພ;
2. ການໃຊ້ເຂັມສັກຢາ, ການໃຊ້ຢາເສບຕິດທາງເສັ້ນເລືອດ, ເຄື່ອງມືການແພດ, ສິ່ງແຫຼມຄົມ ຕ້ອງປະຕິບັດຕາມຫຼັກການປ້ອງກັນແບບຮອບດ້ານ ແລະ ຄົບຊຸດຢ່າງເຂັ້ມງວດ.

**ມາດຕາ 17. ການກັນການຕິດເຊື້ອເຮສໄອວີ/ພະຍາດເອດ ຈາກແມ່ຫາລູກ**

ການກັນການຕິດເຊື້ອເຮສໄອວີ/ພະຍາດເອດ ຈາກແມ່ຫາລູກ ໃຫ້ນຳໃຊ້ວິທີການ ແລະ ມາດຕະການ ຕົ້ນຕໍ ດັ່ງນີ້:

1. ແມ່ຍິງທີ່ຕ້ອງການມີລູກ ແລະ ແມ່ຍິງຖືພາ ຄວນໄດ້ຮັບການກວດເລືອດ ເພື່ອຊອກຫາການຕິດເຊື້ອເຮສໄອວີ;
2. ແມ່ຍິງຖືພາທີ່ຕິດເຊື້ອເຮສໄອວີ ຕ້ອງໄດ້ຮັບຢາຕ້ານເຊື້ອເຮສໄອວີ;
3. ລູກທີ່ເກີດຈາກແມ່ທີ່ຕິດເຊື້ອເຮສໄອວີ ຕ້ອງໄດ້ຮັບຢາຕ້ານເຊື້ອເຮສໄອວີ ຕາມຄູ່ມືປິ່ນປົວ;

4. ແມ່ທີ່ຕິດເຊື້ອເຮສໄອວີ ອາດຈະບໍ່ອອກລູກທາງຊ່ອງຄອດ ແລະ ບໍ່ຄວນລ້ຽງລູກດ້ວຍນ້ຳນົມແມ່.

**ມາດຕາ 18.** **ການກັນດ້ວຍການກວດເລືອດ**

ໂດຍທົ່ວໄປແລ້ວ ທຸກຄົນມີສິດກວດເລືອດດ້ວຍຄວາມສະໝັກໃຈ ຢູ່ສະຖານທີ່ທີ່ມີເງື່ອນໄຂກວດໄດ້ ເພື່ອຊອກຫາການຕິດເຊື້ອເຮສໄອວີ, ຍົກເວັ້ນ ເມື່ອມີຄວາມຈຳເປັນ ຫຼື ກໍລະນີທີ່ລະບຽບກົດໝາຍໄດ້ກຳນົດໄວ້ຢ່າງອື່ນ.

ໃນກໍລະນີ ຄົນເຈັບນອນໂຮງໝໍ ທີ່ບໍ່ຮູ້ສະຕິ ຫຼື ເດັກນ້ອຍອາຍຸຕ່ຳກວ່າສິບສີ່ປີ ຕ້ອງໃຫ້ພໍ່ແມ່ ຫຼື ຜູ້ປົກຄອງ ຫຼື ຍາດໃກ້ຊິດ ເປັນຜູ້ຢັ້ງຢືນ ແລະ ຍິນຍອມໃນການກວດເລືອດ.

ຜົນຂອງການກວດເລືອດ ຕ້ອງຖືກຮັກສາໄວ້ເປັນຄວາມລັບ, ເວັ້ນເສຍແຕ່ມີລະບຽບກົດໝາຍໄດ້ກຳນົດໄວ້ຢ່າງອື່ນ.

ເມື່ອບຸກຄົນໃດຫາກກວດເລືອດ ພົບວ່າໄດ້ຕິດເຊື້ອເຮສໄອວີແລ້ວ ຕ້ອງປະຕິບັດຕາມຄຳແນະນຳຂອງແພດຢ່າງເຂັ້ມງວດ ເປັນຕົ້ນ ການບໍ່ສົ່ງເຊື້ອໃຫ້ຜູ້ອື່ນ.

## ພາກທີ IV
## ການຕ້ານເຊື້ອເຮສໄອວີ/ພະຍາດເອດ

### ໝວດທີ 1
### ການປິ່ນປົວ

**ມາດຕາ 19.** **ການປິ່ນປົວຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ**

ການປິ່ນປົວຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ແລະ ຜູ້ມີພະຍາດແຊກຊ້ອນ ຕ້ອງປະຕິບັດຕາມການແນະນຳຂອງແພດ ແລະ ໄດ້ຮັບການປິ່ນປົວດ້ວຍຢາຕ້ານເຊື້ອເຮສໄອວີ ໃຫ້ຖືກຕ້ອງຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

ບຸກຄົນທີ່ໄດ້ຮັບເຊື້ອເຮສໄອວີ ຍ້ອນອຸປະຕິເຫດ ຫຼື ໂດຍບັງເອີນ ໃນເວລາປະຕິບັດໜ້າທີ່ ຫຼື ໄດ້ຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີນັ້ນ ຕ້ອງໄດ້ຮັບການປິ່ນປົວໂດຍບໍ່ເສຍຄ່າ ແລະ ໄດ້ຮັບການອຸດໜູນຕາມລະບຽບການທີ່ໄດ້ກຳນົດໄວ້.

**ມາດຕາ 20.** **ສະຖານທີ່ປິ່ນປົວ**

ສະຖານທີ່ປິ່ນປົວສຳລັບຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ທີ່ຕ້ອງການຮັບຢາຕ້ານເຊື້ອເຮສໄອວີ (ARV= Antiretroviral) ແມ່ນກະຊວງສາທາລະນະສຸກ ເປັນຜູ້ກຳນົດ.

**ມາດຕາ 21. ຈັນຍາບັນການແພດ**

ຜູ້ປະກອບວິຊາຊີບປິ່ນປົວ ຫຼື ຜູ້ເຮັດວຽກງານກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເອດໄອວີ/ພະຍາດເອດ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຕົນ, ຮັກສາຄວາມລັບຂອງຜູ້ຕິດເຊື້ອເອດໄອວີ ແລະ ຜູ້ເປັນພະຍາດເອດ, ເວັ້ນເສຍແຕ່ມີຄຳສັ່ງຂອງສານ. ນອກຈາກນີ້ ກໍຍັງຕ້ອງເຄົາລົບສິດແຫ່ງການມີຊີວິດ, ການເຄື່ອນໄຫວ ແລະ ກຽດສັກສີຂອງຄົນເຈັບ, ຍາດພີ່ນ້ອງຂອງຄົນເຈັບ ໂດຍປາສະຈາກການຈຳແນກ ແລະ ການລັງກຽດ.

## ໝວດທີ 2
## ການດູແລເບິ່ງແຍງ

**ມາດຕາ 22. ການດູແລເບິ່ງແຍງຢູ່ໃນສະຖານທີ່ບໍລິການປິ່ນປົວທົ່ວໄປ**

ແພດໝໍ ຕ້ອງເອົາໃຈໃສ່ດູແລເບິ່ງແຍງຜູ້ຕິດເຊື້ອເອດໄອວີ, ຜູ້ເປັນພະຍາດເອດ ແລະ ຜູ້ມີພະຍາດແຊກຊ້ອນ ຢ່າງສະເໝີພາບຄືກັນກັບຄົນເຈັບທົ່ວໄປ.

**ມາດຕາ 23. ການດູແລເບິ່ງແຍງຢູ່ໃນສັງຄົມ ແລະ ຊຸມຊົນ**

ສັງຄົມ ແລະ ຊຸມຊົນ ເອົາໃຈໃສ່ດູແລເບິ່ງແຍງຜູ້ຕິດເຊື້ອເອດໄອວີ ແລະ ຜູ້ເປັນພະຍາດເອດ ໂດຍປາສະຈາກການຈຳແນກ ແລະ ການລັງກຽດ, ໃຫ້ການຊ່ວຍເຫຼືອ, ເບິ່ງແຍງ ແລະ ໃຫ້ກຳລັງໃຈພ້ອມທັງສຶກສາອົບຮົມຜູ້ກ່ຽວບໍ່ໃຫ້ແຜ່ເຊື້ອເອດໄອວີ ໄປສູ່ຄົນອື່ນ ແລະ ສາມາດຢູ່ຮ່ວມກັນຢ່າງເປັນປົກກະຕິ.

ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະ ອົງການຈັດຕັ້ງອື່ນ ສາມາດສ້າງຕັ້ງມູນນິທິ, ສະມາຄົມ, ກອງທຶນ, ສະຖານທີ່ໃຫ້ການດູແລເບິ່ງແຍງຜູ້ຕິດເຊື້ອເອດໄອວີ ແລະ ຜູ້ເປັນພະຍາດເອດ ຢູ່ໃນຊຸມຊົນ ຕາມລະບຽບກົດໝາຍ.

**ມາດຕາ 24. ການດູແລເບິ່ງແຍງຢູ່ໃນຄອບຄົວ**

ຄອບຄົວ ຕ້ອງຮັບຜິດຊອບ, ໃຫ້ກຳລັງໃຈ, ດູແລເບິ່ງແຍງ, ຊ່ວຍເຫຼືອຜູ້ຕິດເຊື້ອເອດໄອວີ ແລະ ຜູ້ເປັນພະຍາດເອດ ໂດຍປາສະຈາກການຈຳແນກ ແລະ ການລັງກຽດ.

## ໝວດທີ 3
## ການຊ່ວຍເຫຼືອ

**ມາດຕາ 25. ການໃຫ້ຄຳປຶກສາ**

ການໃຫ້ຄຳປຶກສາ ແມ່ນ ຂະບວນການສົນທະນາ, ແລກປ່ຽນຄຳຄິດຄຳເຫັນແບບເປັນການສ່ວນຕົວ ລະຫວ່າງຜູ້ໃຫ້ຄຳປຶກສາ ແລະ ຜູ້ຮັບຄຳປຶກສາ ເພື່ອຮັບຮູ້, ເຂົ້າໃຈກ່ຽວກັບເຊື້ອເອດໄອວີ ແລະ ເພື່ອຊອກຫາວິທີແກ້ໄຂດ້ວຍຕົນເອງ. ບໍ່ວ່າກໍລະນີໃດ ການກວດເລືອດເພື່ອຊອກຫາການຕິດເຊື້ອເອດ

ໄອວີ ຕ້ອງຜ່ານຂະບວນການໃຫ້ຄຳປຶກສາກ່ອນ ແລະ ຫຼັງການກວດເລືອດ ພ້ອມທັງຮັກສາໄວ້ເປັນຄວາມລັບ.

ຜູ້ໃຫ້ຄຳປຶກສາ ຕ້ອງມີມາດຕະຖານ, ຄວາມຮູ້, ຄວາມສາມາດ ແລະ ໄດ້ຮັບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 26. ການຊ່ວຍເຫຼືອທາງດ້ານເສດຖະກິດ**

ຄະນະກຳມະການຕ້ານເອດແຕ່ລະຂັ້ນ, ການຈັດຕັ້ງ ແລະ ບຸກຄົນຕ່າງໆ ມີໜ້າທີ່ຂົນຂວາຍຊອກຫາທຶນຈາກພາຍໃນ ແລະ ຕ່າງປະເທດ ເຂົ້າໃນການຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ໃຫ້ມີວຽກເຮັດງານທຳຕາມເງື່ອນໄຂຕົວຈິງ.

**ມາດຕາ 27. ການຊ່ວຍເຫຼືອທາງດ້ານສັງຄົມ**

ຄະນະກຳມະການຕ້ານເອດແຕ່ລະຂັ້ນ, ການຈັດຕັ້ງ ແລະ ບຸກຄົນຕ່າງໆ ຕ້ອງເອົາໃຈໃສ່ປະສານງານ, ປຸກລະດົມ, ຊຸກຍູ້ ຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂ ໃຫ້ແກ່ຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ສາມາດດຳລົງຊີວິດ ຢູ່ໃນສັງຄົມໄດ້ຢ່າງເປັນປົກກະຕິ, ໄດ້ຮັບການປິ່ນປົວ, ມີວຽກເຮັດງານທຳ, ສຶກສາອົບຮົມ ແລະ ໄດ້ຮັບຂໍ້ມູນຂ່າວສານ ຢ່າງສະເໝີພາບຄືກັນກັບຄົນທົ່ວໄປໂດຍປາສະຈາກການຈຳແນກ ແລະ ການລັງກຽດ.

## ພາກທີ V

## ມາດຕະການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ

### ໝວດທີ 1

### ມາດຕະການທາງການແພດ

**ມາດຕາ 28. ການເຝົ້າລະວັງ**

ຂະແໜງການສາທາລະນະສຸກ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ດຳເນີນ ການສຳຫຼວດ, ການຕິດຕາມ, ການເກັບກຳ ແລະ ການວິໄຈຂໍ້ມູນ ເພື່ອລາຍງານກ່ຽວກັບ ອັດຕາການຕິດເຊື້ອເຮສໄອວີ/ພະຍາດເອດ ເປັນຕົ້ນ ໃນກຸ່ມຄົນທີ່ມີຄວາມສ່ຽງ ແນໃສ່ສຶກສາ, ຄົ້ນຄວ້າ ທ່າອ່ຽງ ຂອງການແຜ່ລະບາດເຊື້ອເຮສໄອວີ ແຕ່ລະໄລຍະຢູ່ໃນທົ່ວປະເທດ ທັງເປັນບ່ອນອີງໃຫ້ແກ່ການສ້າງ ແລະ ປະຕິບັດແຜນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ.

**ມາດຕາ 29. ການກວດວິເຄາະ**

ຜູ້ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອເຮສໄອວີ ຄວນໄດ້ຮັບການກວດວິເຄາະ ເພື່ອຊອກຫາການຕິດເຊື້ອເຮສໄອວີ.

ຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ຄວນໄດ້ຮັບການກວດວິເຄາະ ເພື່ອຊອກຫາປະລິມານເຊື້ອເຮສໄອວີ ແລະ ການກວດວິເຄາະອື່ນໆ.

ມາດຕາ 30. ການປິ່ນປົວ

ໃນກໍລະນີທີ່ ຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ຫາກເປັນພະຍາດອື່ນນໍາມັ້ນ ກໍສາມາດໄປຮັບການປິ່ນປົວຢູ່ສະຖານທີ່ປິ່ນປົວທົ່ວໄປ. ສໍາລັບການປິ່ນປົວດ້ວຍຢາຕ້ານເຊື້ອເຮສໄອວີ ແມ່ນໄປຮັບການປິ່ນປົວຢູ່ສະຖານທີ່ ທີ່ໄດ້ກໍານົດໄວ້.

ການໃຊ້ຈ່າຍໃນການປິ່ນປົວຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ດ້ວຍຢາຕ້ານເຊື້ອເຮສໄອວີ ແລະ ປິ່ນປົວພະຍາດແຊກຊ້ອນຕ່າງໆ ໃຫ້ປະຕິບັດຕາມລະບຽບການທີ່ໄດ້ກໍານົດໄວ້.

ມາດຕາ 31. ການຄົ້ນຄວ້າທາງດ້ານວິທະຍາສາດ

ການຄົ້ນຄວ້າທາງດ້ານວິທະຍາສາດ ລະດັບຊາດ, ຂະແໜງການ, ພາກພື້ນ ແລະ ສາກົນ ກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ ເປັນຕົ້ນ ວິທີການກັນ, ປິ່ນປົວ ແລະ ອື່ນໆ ແມ່ນໄດ້ຮັບການສົ່ງເສີມ ເພື່ອເປັນຂໍ້ມູນໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ແລະ ເພື່ອຮັບໃຊ້ຈຸດປະສົງອື່ນ.

ການຄົ້ນຄວ້າດັ່ງກ່າວ ຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ກ່ຽວຂ້ອງຕາມລະບຽບການ.

## ໝວດທີ 2
## ມາດຕະການທາງສັງຄົມ

ມາດຕາ 32. ການສະໜອງຂໍ້ມູນຂ່າວສານ

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ອາໄສຢູ່ໃນ ສປປ ລາວ ມີສິດເຂົ້າເຖິງຂໍ້ມູນຂ່າວສານ ກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ ພະຍາດເອດ.

ລັດ, ການຈັດຕັ້ງ ແລະ ສັງຄົມ ຕ້ອງສະໜອງຂໍ້ມູນຂ່າວສານຕ່າງໆ ກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໂດຍໃຫ້ສອດຄ່ອງກັບລະບຽບກົດໝາຍ, ຮີດຄອງປະເພນີ, ວັດທະນະທໍາອັນດີງາມຂອງຊາດ ແລະ ທ້ອງຖິ່ນ.

ມາດຕາ 33. ການປະກັນສຸຂະພາບ

ຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ແລະ ຜູ້ໄດ້ຮັບຜົນກະທົບຈາກເຊື້ອເຮສໄອວີ/ພະຍາດເອດ ມີສິດເຂົ້າເຖິງກອງທຶນປະກັນສຸຂະພາບ ເພື່ອຮັບການບໍລິການດ້ານການແພດ ຢ່າງສະເໝີພາບຕາມລະບຽບການທີ່ໄດ້ກໍານົດໄວ້.

ມາດຕາ 34. ການບໍ່ຈໍາແນກ ແລະ ບໍ່ລັງກຽດ

ຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ແລະ ຜູ້ໄດ້ຮັບຜົນກະທົບຈາກເຊື້ອເຮສໄອວີ/ພະຍາດເອດ ມີຄວາມສະເໝີພາບຄືກັນກັບຄົນທົ່ວໄປຢູ່ໃນສັງຄົມ ໃນການດໍາລົງຊີວິດ, ການເຄື່ອນໄຫວ ໂດຍປາສະຈາກການຈໍາແນກ ແລະ ການລັງກຽດ.

ມາດຕາ 35. ການຮັກສາຄວາມລັບ

ຜູ້ປະກອບວິຊາຊີບປິ່ນປົວ, ບຸກຄົນອື່ນ ຫຼື ຜູ້ເຮັດວຽກງານກ່ຽວກັບການສະກັດກັ້ນ ແລະ ຕ້ານ

ເຊື້ອເຮສໄອວີ/ພະຍາດເອດ ຕ້ອງໄດ້ຮັກສາຄວາມລັບຢ່າງເຂັ້ມງວດກ່ຽວກັບພະຍາດ, ຕາໜີ, ຈຸດພິເສດຂອງຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ທີ່ຍັງມີຊີວິດ ຫຼື ເສຍຊີວິດແລ້ວ, ເວັ້ນເສຍແຕ່ມີຄຳສັ່ງຂອງສານ ຫຼື ຄວາມສະໝັກໃຈຂອງຜູ້ກ່ຽວ.

# ພາກທີ VI
# ຄວາມຮັບຜິດຊອບກ່ຽວກັບວຽກງານ ສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ

## ໝວດທີ 1
## ຄວາມຮັບຜິດຊອບຂອງຄະນະກຳມະການຕ້ານເອດ

**ມາດຕາ 36. ຄະນະກຳມະການຕ້ານເອດ**

ເພື່ອເຮັດໃຫ້ວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ມີປະສິດທິຜົນນັ້ນ ລັດຖະບານສ້າງຕັ້ງ ຄະນະກຳມະການຕ້ານເອດ ຊຶ່ງປະກອບດ້ວຍ:

- ຄະນະກຳມະການແຫ່ງຊາດຕ້ານເອດ;
- ຄະນະກຳມະການຕ້ານເອດ ແຂວງ, ນະຄອນ;
- ຄະນະກຳມະການຕ້ານເອດ ເມືອງ, ເທດສະບານ.

ຄະນະກຳມະການຕ້ານເອດແຕ່ລະຂັ້ນ ມີກອງເລຂາຊ່ວຍວຽກ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 37. ທີ່ຕັ້ງ ແລະ ພາລະບົດບາດຂອງຄະນະກຳມະການຕ້ານເອດ**

ຄະນະກຳມະການຕ້ານເອດ ແມ່ນ ອົງການຈັດຕັ້ງໜຶ່ງຂອງລັດ ຊຶ່ງປະກອບດ້ວຍຫຼາຍພາກສ່ວນ, ມີພາລະບົດບາດ ເປັນເສນາທິການໃຫ້ຂັ້ນເທິງຂອງຕົນ ໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຢ່າງເປັນເອກະພາບໃນທົ່ວປະເທດ ໂດຍແມ່ນຂະແໜງການສາທາລະນະສຸກ ເປັນໃຈກາງ.

ບຸກຄະລາກອນ ຂອງຄະນະກຳມະການຕ້ານເອດແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 38. ສິດ ແລະ ໜ້າທີ່ຂອງຄະນະກຳມະການແຫ່ງຊາດຕ້ານເອດ**

ຄະນະກຳມະການແຫ່ງຊາດຕ້ານເອດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາ, ຮັບຜ່ານຮ່າງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຂອງກະຊວງສາທາລະນະສຸກ ຊຶ່ງຈະນຳສະເໜີລັດຖະບານ ພິຈາລະນາ;

2. ຊີ້ນຳ ວຽກງານໂຄສະນາ, ເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໃນຂອບເຂດທົ່ວປະເທດ;
3. ໃຫ້ຄຳປຶກສາ, ຄຳແນະນຳ, ຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານ ກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ;
4. ຮັບຟັງການລາຍງານ ກ່ຽວກັບການເຄື່ອນໄຫວວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຈາກພາກສ່ວນຕ່າງໆ ທີ່ກ່ຽວຂ້ອງ;
5. ຂົນຂວາຍ, ຍາດແຍ່ງ ການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ ເພື່ອນຳໃຊ້ເຂົ້າໃນວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ;
6. ສະຫຼຸບ, ປະເມີນ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕໍ່ລັດຖະບານຢ່າງເປັນປົກກະຕິ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 39. ສິດ ແລະ ໜ້າທີ່ຂອງຄະນະກຳມະການຕ້ານເອດ ແຂວງ, ນະຄອນ**

ຄະນະກຳມະການຕ້ານເອດ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຫັນຂະຫຍາຍ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ທີ່ຂັ້ນເທິງໄດ້ຮັບຮອງເອົາແລ້ວ ເປັນແຜນການ, ໂຄງການ ໃນຂັ້ນຂອງຕົນ ເພື່ອສະເໜີຂັ້ນເທິງພິຈາລະນາຕົກລົງ ແລ້ວຈັດຕັ້ງປະຕິບັດ;
2. ຊີ້ນຳ ວຽກງານ ໂຄສະນາ, ເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ໃຫ້ຄຳປຶກສາ, ຄຳແນະນຳ, ຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ພາຍໃນ ແຂວງ, ນະຄອນ;
4. ຂົນຂວາຍ, ຍາດແຍ່ງການຊ່ວຍເຫຼືອຈາກພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕາມການມອບໝາຍຂອງຂັ້ນເທິງ;
5. ສະຫຼຸບ, ປະເມີນ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດໃນຂັ້ນຂອງຕົນ ໃຫ້ຄະນະກຳມະການແຫ່ງຊາດຕ້ານເອດ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 40. ສິດ ແລະ ໜ້າທີ່ຂອງຄະນະກຳມະການຕ້ານເອດ ເມືອງ, ເທດສະບານ**

ຄະນະກຳມະການຕ້ານເອດ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ໂຄງການກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ທີ່ຂັ້ນເທິງໄດ້ຮັບຮອງເອົາແລ້ວ;
2. ເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ ກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

3. ສະຫຼຸບ, ປະເມີນ ແລະ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໃນຂັ້ນຂອງຕົນ ໃຫ້ຄະນະກຳມະການຕ້ານເອດຂັ້ນ ແຂວງ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ຄວາມຮັບຜິດຊອບຂອງລັດ

### ມາດຕາ 41. ຄວາມຮັບຜິດຊອບຂອງລັດ

ລັດ ວາງລະບຽບການ ກ່ຽວກັບການ ຄຸ້ມຄອງ, ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ, ການປິ່ນປົວ, ການດູແລເບິ່ງແຍງ ແລະ ການຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ແລະ ຜູ້ໄດ້ຮັບຜົນກະທົບ ລວມທັງການສະໜອງງົບປະມານ, ການປະກອບພາຫະນະ, ອຸປະກອນ ແລະ ບຸກຄະລາກອນໃຫ້ແກ່ວຽກງານດັ່ງກ່າວ.

### ມາດຕາ 42. ຄວາມຮັບຜິດຊອບຂອງຂະແໜງການ

ຂະແໜງການຕ່າງໆ ເປັນຕົ້ນ ຂະແໜງການ ສຶກສາ, ຖະແຫຼງຂ່າວ ແລະ ວັດທະນະທຳ, ແຮງງານ ແລະ ສະຫວັດດີການສັງຄົມ, ໂຍທາທິການ ແລະ ຂົນສົ່ງ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ອົງການທ່ອງທ່ຽວ, ອົງການກາແດງລາວ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ມີໜ້າທີ່ ຊີ້ນຳ, ຊຸກຍູ້, ກວດກາການເຄື່ອນໄຫວວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕາມພາລະບົດບາດຂອງຕົນ ໂດຍປະສານສົມທົບກັບຂະແໜງການສາທາລະນະສຸກ ຫຼື ຄະນະກຳມະການຕ້ານເອດ ກ່ຽວກັບວຽກງານດັ່ງກ່າວ.

ຂະແໜງການຕ່າງໆ ຕ້ອງສ້າງຕັ້ງໜ່ວຍງານປະສານງານຂອງຕົນຂຶ້ນ ເພື່ອຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ.

## ໝວດທີ 3
## ຄວາມຮັບຜິດຊອບຂອງສັງຄົມ, ຊຸມຊົນ, ຄອບຄົວ ແລະ ບຸກຄົນ

### ມາດຕາ 43. ຄວາມຮັບຜິດຊອບຂອງສັງຄົມ ແລະ ຊຸມຊົນ

ສັງຄົມ ແລະ ຊຸມຊົນ ມີຄວາມຮັບຜິດຊອບຮ່ວມມືກັບຂະແໜງການທີ່ກ່ຽວຂ້ອງ ໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ດ້ວຍການໂຄສະນາ, ເຜີຍແຜ່, ປຸກລະດົມ ແລະ ຂົນຂວາຍທຸກຊັ້ນຄົນເຫັນໄດ້ເຖິງຄວາມອັນຕະລາຍຂອງເຊື້ອເຮສໄອວີ/ພະຍາດເອດ, ຫຼີກເວັ້ນພຶດຕິກຳທີ່ມີຄວາມສ່ຽງ ຫຼື ປັດໄຈທີ່ນຳໄປສູ່ການຕິດເຊື້ອເຮສໄອວີ ລວມທັງຮ່ວມມືໃນການສະໜອງຂໍ້ມູນຂ່າວສານກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ ໃຫ້ແກ່ພາກສ່ວນຕ່າງໆທີ່ກ່ຽວຂ້ອງ, ໃຫ້ການຊ່ວຍເຫຼືອ, ເບິ່ງແຍງ

ຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ແລະ ຜູ້ໄດ້ຮັບຜົນກະທົບ ໂດຍປາສະຈາກການຈຳແນກ ແລະ ການລັງກຽດ.

**ມາດຕາ 44. ຄວາມຮັບຜິດຊອບຂອງຄອບຄົວ**

ຄອບຄົວ ມີຄວາມຮັບຜິດຊອບໂດຍກົງ ໃນການສຶກສາອົບຮົມສະມາຊິກຄອບຄົວຂອງຕົນ ໃຫ້ເຫັນໄດ້ຄວາມອັນຕະລາຍຂອງເຊື້ອເຮສໄອວີ/ພະຍາດເອດ, ມີສະຕິຫຼີກເວັ້ນພຶດຕິກຳສ່ຽງທີ່ຈະພາໃຫ້ຕິດເຊື້ອເຮສໄອວີ.

ຄອບຄົວ ເປັນຜູ້ໃຫ້ກຳລັງໃຈ ແລະ ເອົາໃຈໃສ່ຊ່ວຍເຫຼືອດູແລເບິ່ງແຍງ, ປິ່ນປົວສະມາຊິກຄອບຄົວທີ່ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ໂດຍປາສະຈາກການຈຳແນກ ແລະ ການລັງກຽດ.

**ມາດຕາ 45. ຄວາມຮັບຜິດຊອບຂອງບຸກຄົນທົ່ວໄປ**

ບຸກຄົນທຸກເພດທຸກໄວ ທີ່ອາໄສຢູ່ ສປປ ລາວ ຕ້ອງເປັນເຈົ້າການເຂົ້າຮ່ວມໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ, ຫຼີກເວັ້ນພຶດຕິກຳສ່ຽງຕໍ່ການຕິດເຊື້ອເຮສໄອວີ, ສະໝັກໃຈເຂົ້າຮັບການກວດເລືອດ ເພື່ອຊອກຫາການຕິດເຊື້ອເຮສໄອວີ, ໃນກໍລະນີທີ່ຕິດເຊື້ອເຮສໄອວີແລ້ວ ກໍຕ້ອງເຂົ້າຮັບການປິ່ນປົວຢ່າງທັນການ ແລະ ບໍ່ແຜ່ເຊື້ອໃຫ້ຄົນອື່ນ.

ສຳລັບຜູ້ທີ່ດຳລົງຊີວິດ ແລະ ເຄື່ອນໄຫວຢູ່ໃນສະພາບແວດລ້ອມ, ວິຊາຊີບ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອເຮສໄອວີ/ພະຍາດເອດ ຕ້ອງປະຕິບັດຕາມຫລັກການ, ລະບຽບການ, ວິທີການ ແລະ ມາດຕະການການກັນເຊື້ອເຮສໄອວີ/ພະຍາດເອດ ຢ່າງເຂັ້ມງວດ.

**ມາດຕາ 46. ຄວາມຮັບຜິດຊອບຂອງຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ**

ຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ຕ້ອງມີຄວາມຮັບຜິດຊອບເອົາໃຈໃສ່ປິ່ນປົວຕົນເອງ ແລະ ລາຍງານສະພາບດ້ານສຸຂະພາບຂອງຕົນ ໃຫ້ຜູ້ຮັບຜິດຊອບວຽກງານດັ່ງກ່າວ ພ້ອມທັງປະຕິບັດຄຳແນະນຳຂອງແພດ ໃນການປິ່ນປົວ, ດູແລເບິ່ງແຍງ ຢ່າງເຂັ້ມງວດ.

ນອກຈາກຄວາມຮັບຜິດຊອບນີ້ແລ້ວ ຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ຍັງມີສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

1. ໄດ້ຮັບການປົກປ້ອງຈາກລັດ ໃນການເຄື່ອນໄຫວວຽກງານ, ການປະກອບອາຊີບ, ການສຶກສາຮ່ຳຮຽນ ແລະ ໄດ້ຮັບສິດອື່ນ ດັ່ງດຽວກັນກັບບຸກຄົນທົ່ວໄປ;
2. ເຂົ້າຮ່ວມໃນວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ດ້ວຍການໃຫ້ຄຳແນະນຳ, ຄຳປຶກສາ ແກ່ຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດດ້ວຍກັນ ແລະ ບຸກຄົນອື່ນ ເປັນຕົ້ນ ກຸ່ມທີ່ມີຄວາມສ່ຽງ;
3. ຫຼີກເວັ້ນພຶດຕິກຳທີ່ຈະແຜ່ເຊື້ອເຮສໄອວີ ໃຫ້ຜູ້ອື່ນດ້ວຍວິທີໃດກໍຕາມ.

# ພາກທີ VII
# ກອງທຶນສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ

**ມາດຕາ 47. ກອງທຶນ**

ລັດ ສົ່ງເສີມການສ້າງຕັ້ງກອງທຶນສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ແຕ່ລະຂັ້ນ ໂດຍການເຫັນດີຂອງຂະແໜງການສາທາລະນະສຸກ ໃນຂັ້ນຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານໂຄສະນາ ສຸຂະສຶກສາ ເຮັດໃຫ້ສັງຄົມໄດ້ຮັບຮູ້ເຖິງຄວາມອັນຕະລາຍ, ວິທີການກັນເຊື້ອເຮສໄອວີ/ພະຍາດເອດ, ການປິ່ນປົວ, ການດູແລເບິ່ງແຍງ ແລະ ການຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ.

**ມາດຕາ 48. ແຫຼ່ງກອງທຶນ**

ແຫຼ່ງກອງທຶນສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໄດ້ມາຈາກ:

1. ງົບປະມານຂອງລັດ;
2. ການປະກອບສ່ວນຈາກ ບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ຢູ່ ສປປ ລາວ;
3. ການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນ ແລະ ຕ່າງປະເທດ;
4. ກິດຈະກຳຫາລາຍໄດ້ ເຊັ່ນ: ການແຂ່ງຂັນກິລາ-ກາຍຍະກຳ, ການສະແດງສິນລະປະວັນນະຄະດີ ແລະ ອື່ນໆ.

**ມາດຕາ 49. ການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕ້ອງດຳເນີນຕາມກົດລະບຽບຂອງກອງທຶນ ໂດຍສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ.

# ພາກທີ VIII
# ຂໍ້ຫ້າມ

**ມາດຕາ 50. ຂໍ້ຫ້າມສຳລັບຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ**

ຫ້າມຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ມີການກະທຳ ດັ່ງນີ້:

1. ແຜ່ເຊື້ອເຮສໄອວີ ໄປສູ່ບຸກຄົນອື່ນ ດ້ວຍວິທີການຕ່າງໆ;
2. ບໍລິຈາກເລືອດ, ເນື້ອເຍື່ອ ແລະ ອະໄວຍະວະຕ່າງໆ;
3. ໃຫ້ສິນບົນແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ;
4. ລະເມີດຄຳແນະນຳຂອງແພດກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ;
5. ມີການກະທຳອື່ນ ທີ່ເປັນຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 51. ຂໍ້ຫ້າມສຳລັບຜູ້ບໍລິການດ້ານການແພດ**

ຫ້າມຜູ້ບໍລິການດ້ານການແພດ ມີການກະທຳ ດັ່ງນີ້:

1. ກວດເລືອດເພື່ອຊອກຫາການຕິດເຊື້ອເຮສໄອວີ ໂດຍບໍ່ໄດ້ຮັບການຍິນຍອມຈາກຜູ້ທີ່ກ່ຽວຂ້ອງ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ;
2. ແຈ້ງ ຫຼື ລາຍງານຜົນການກວດເລືອດກ່ຽວກັບການຕິດເຊື້ອເຮສໄອວີ ຖ້າຫາກບໍ່ທັນໄດ້ຮັບຜົນການກວດຢັ້ງຢືນທີ່ແນ່ນອນ;
3. ເປີດເຜີຍຄວາມລັບຂອງຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ເວັ້ນເສຍແຕ່ກົດໝາຍໄດ້ກຳນົດໄວ້ຢ່າງອື່ນ;
4. ນຳເອົາເລືອດທີ່ບໍ່ໄດ້ຜ່ານການກວດຊອກຫາການຕິດເຊື້ອເຮສໄອວີ ມາໃສ່ຄົນເຈັບ;
5. ປະຕິເສດການປິ່ນປົວ, ການດູແລເບິ່ງແຍງ, ການຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີ ຫຼື ຜູ້ເປັນພະຍາດເອດ;
6. ນຳໃຊ້ອຸປະກອນການແພດທີ່ບໍ່ປອດໄພ ເຂົ້າໃນການປິ່ນປົວຄົນເຈັບ;
7. ປອມແປງ, ກົດໜ່ວງຖ່ວງດຶງເອກະສານ ກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ;
8. ສວຍໃຊ້ໜ້າທີ່ຕຳແໜ່ງ, ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ ຫຼື ພັກພວກ ໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ;
9. ມີການກະທຳອື່ນ ທີ່ເປັນຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 52. ຂໍ້ຫ້າມສຳລັບບຸກຄົນ ແລະ ການຈັດຕັ້ງອື່ນ**

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນ ມີການກະທຳ ດັ່ງນີ້:

1. ຂັດຂວາງ ແລະ ເມີນເສີຍຕໍ່ການເຄື່ອນໄຫວການປະຕິບັດໜ້າທີ່ ໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
2. ສົ່ງເສີມການໃຊ້ສິດເສລີພາບສ່ວນບຸກຄົນເພື່ອແຜ່ຂະຫຍາຍເຊື້ອເຮສໄອວີ;
3. ມີພຶດຕິກຳທີ່ມີຄວາມສ່ຽງ ຫຼື ມີເປົ້າໃຈ ທີ່ພາໃຫ້ມີການແຜ່ຂະຫຍາຍເຊື້ອເຮສໄອວີ;
4. ປະຕິເສດການປິ່ນປົວ, ການດູແລເບິ່ງແຍງ ແລະ ການຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ຢູ່ໃນຄວາມຮັບຜິດຊອບຂອງຕົນ ທັງໆທີ່ຕົນມີເງື່ອນໄຂ ແລະ ຄວາມສາມາດ;
5. ຮັບສິນບົນ ແລະ ໃຫ້ສິນບົນແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ;
6. ຈຳແນກ, ລັງກຽດ, ໝິ່ນປະໝາດ, ໃຊ້ຄວາມຮຸນແຮງ, ບັງຄັບ ນາບຂູ່ ແລະ ໃສ່ຮ້າຍປ້າຍສີຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ຫຼື ຜູ້ໄດ້ຮັບຜົນກະທົບຈາກເຊື້ອເຮສໄອວີ/ພະຍາດເອດ ແລະ ຜູ້ບໍລິການດ້ານການແພດ;
7. ໄລ່ຜູ້ຕິດເຊື້ອເຮສໄອວີ ທີ່ມີສຸຂະພາບແຂງແຮງອອກຈາກໜ້າທີ່ວຽກງານ ຫຼື ບໍ່ຮັບເອົາຜູ້ຕິດເຊື້ອເຮັສໄອວີ ເຂົ້າເຮັດວຽກ;
8. ມີການກະທຳອື່ນ ທີ່ເປັນຂໍ້ຫ້າມຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

# ພາກທີ IX

# ການຄຸ້ມຄອງ ແລະ ການກວດກາວຽກງານ ສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ

## ໝວດທີ 1

## ການຄຸ້ມຄອງ

**ມາດຕາ 53. ອົງການຄຸ້ມຄອງ**

ລັດຖະບານຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງສາທາລະນະສຸກ ເປັນໃຈກາງປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ປະກອບດ້ວຍ:

1. ກະຊວງສາທາລະນະສຸກ;
2. ພະແນກສາທາລະນະສຸກ ແຂວງ, ນະຄອນ;
3. ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ.

**ມາດຕາ 54. ສິດ ແລະ ໜ້າທີ່ຂອງກະຊວງສາທາລະນະສຸກ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ກະຊວງສາທາລະນະສຸກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າຮ່າງ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ເພື່ອສະເໜີລັດຖະບານພິຈາລະນາ ພາຍຫຼັງໄດ້ຮັບຜ່ານຈາກຄະນະກຳມະການແຫ່ງຊາດຕ້ານເອດແລ້ວ;
2. ຫັນເອົານະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ມາເປັນແຜນການ, ແຜນງານ, ໂຄງການ ແລະ ນິຕິກຳລະອຽດຂອງຕົນ ລວມທັງການຄົ້ນຄວ້າວິທະຍາສາດການແພດ ກ່ຽວກັບເຊື້ອເຮສໄອວີ/ພະຍາດເອດ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຢ່າງກວ້າງຂວາງ;
4. ພິຈາລະນາແກ້ໄຂຄຳສະເໜີຂອງ ພົນລະເມືອງ, ຂະແໜງການ ແລະ ພາກສ່ວນອື່ນກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເອສໄອວີ/ພະຍາດເອດ;
5. ກໍ່ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ທີ່ກ່ຽວຂ້ອງ ໃຫ້ມີຄວາມຮູ້, ຄວາມສາມາດ ແລະ ມີຈັນຍາບັນທາງດ້ານວິຊາຊີບ;

6. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕາມພາລະບົດບາດຂອງຕົນ;
7. ພົວພັນ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ;
8. ສະຫຼຸບ, ປະເມີນຜົນ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໃຫ້ຄະນະກຳມະການແຫ່ງຊາດຕ້ານເອດ ແລະ ລັດຖະບານ ເປັນແຕ່ລະໄລຍະ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55. ສິດ ແລະ ໜ້າທີ່ຂອງພະແນກສາທາລະນະສຸກ ແຂວງ, ນະຄອນ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ພະແນກສາທາລະນະສຸກ ແຂວງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຫັນນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ຂອງຂັ້ນເທິງ ມາເປັນ ແຜນການ, ແຜນງານ, ໂຄງການ ຂອງຕົນກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ແລ້ວຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ ແລະ ຂໍ້ມູນຂ່າວສານກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ພາຍໃນ ແຂວງ, ນະຄອນ ຢ່າງກວ້າງຂວາງ;
3. ຊີ້ນຳ ແລະ ຕິດຕາມ ການເຄື່ອນໄຫວວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ;
4. ໃຫ້ຄຳແນະນຳ ໃນການປິ່ນປົວ ແລະ ຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ພິຈາລະນາແກ້ໄຂຄຳສະເໜີຂອງ ພົນລະເມືອງ, ຂະແໜງການ ແລະ ພາກສ່ວນອື່ນກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕາມພາລະບົດບາດຂອງຕົນ;
6. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
7. ພົວພັນ ຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕາມການມອບໝາຍຂອງຂັ້ນເທິງ;
8. ສະຫລຸບ, ປະເມີນຜົນ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໃຫ້ຂັ້ນເທິງ ເປັນແຕ່ລະໄລຍະ;

9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 56. ສິດ ແລະ ໜ້າທີ່ຂອງຫ້ອງການສາທາລະນະສຸກ ເມືອງ, ເທດສະບານ**

ໃນການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຫ້ອງການສາທາລະນະສຸກ ເມືອງ, ເທດສະບານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນການ, ແຜນງານ, ໂຄງການ ແລະ ນິຕິກຳ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ທີ່ຂັ້ນເທິງວາງອອກໃຫ້ມີປະສິດທິຜົນ;
2. ເຜີຍແຜ່ລະບຽບກົດໝາຍ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ພິຈາລະນາແກ້ໄຂຄຳສະເໜີຂອງພົນລະເມືອງ, ຂະແໜງການ ແລະ ພາກສ່ວນອື່ນກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕາມພາລະບົດບາດ ແລະ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ສະຫຼຸບ, ປະເມີນຜົນ ແລະ ລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດໃຫ້ຂັ້ນເທິງຂອງຕົນ ເປັນແຕ່ລະໄລຍະ;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

ໃນກໍລະນີທີ່ຈຳເປັນ ອາດຈະສ້າງຕັ້ງໜ່ວຍງານຢູ່ສຸກສາລາຂຶ້ນ ເພື່ອຊ່ວຍຫ້ອງການສາທາລະນະສຸກ ເມືອງ, ເທດສະບານ ໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕາມການຕົກລົງຂອງກະຊວງສາທາລະນະສຸກ.

**ມາດຕາ 57. ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້.

## ໝວດທີ 2

## ການກວດກາ

**ມາດຕາ 58. ອົງການກວດກາ**

ອົງການກວດກາວຽກງານສະກັດກັ້ນ ແລະ ຕ້ານເຊື້ອເອດໄອວີ/ພະຍາດເອດ ມີ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານສະກັດກັ້ນ ແລະ ຕ້ານເຊື້ອເອດໄອວີ/ພະຍາດເອດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 53 ຂອງກົດໝາຍສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ແລະ ການຕິດຕາມກວດກາຂອງປະຊາຊົນ ລວມທັງທາງສຽງສັງຄົມ.

**ມາດຕາ 59. ສິດ ແລະ ໜ້າທີ່ ຂອງອົງການກວດກາ**

ອົງການກວດກາ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ກວດກາການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນການ, ໂຄງການ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເອດໄອວີ/ພະຍາດເອດ;
2. ກວດກາຜົນການຈັດຕັ້ງປະຕິບັດມາດຕະການສະກັດກັ້ນ ແລະ ຕ້ານເຊື້ອເອດໄອວີ/ພະຍາດເອດ ເປັນຕົ້ນ ການໂຄສະນາຄວາມອັນຕະລາຍຂອງເຊື້ອເອດໄອວີ/ພະຍາດເອດ, ການປິ່ນປົວ, ການດູແລເບິ່ງແຍງ, ການຊ່ວຍເຫຼືອ, ການບໍ່ຈຳແນກ ແລະ ບໍ່ລັງກຽດຜູ້ຕິດເຊື້ອເອດໄອວີ ແລະ ຜູ້ເປັນພະຍາດເອດ;
3. ກວດກາການແກ້ໄຂ ຄຳສະເໜີຂອງພົນລະເມືອງ, ຂະແໜງການ ແລະ ພາກສ່ວນອື່ນ ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານເຊື້ອເອດໄອວີ/ພະຍາດເອດ;
4. ປະສານສົມທົບກັບຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ ໃນການກວດກາ ແລະ ແກ້ໄຂວຽກງານສະກັດກັ້ນ ແລະ ຕ້ານເຊື້ອເອດໄອວີ/ພະຍາດເອດ ຕາມພາລະບົດບາດຂອງຕົນ;
5. ແກ້ໄຂຜົນຂອງການກວດກາຕາມພາລະບົດບາດຂອງຕົນ ຫຼື ສະເໜີ ໃຫ້ຂັ້ນເທິງພິຈາລະນາຕົກລົງ;
6. ສະຫຼຸບ, ປະເມີນຜົນ ແລະ ລາຍງານ ກ່ຽວກັບຜົນຂອງການກວດກາ ໃຫ້ຂັ້ນເທິງເປັນແຕ່ລະໄລຍະ.

**ມາດຕາ 60. ຮູບການການກວດກາ**

ການກວດກາວຽກງານສະກັດກັ້ນ ແລະ ຕ້ານເຊື້ອເອດໄອວີ/ພະຍາດເອດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນຊຶ່ງຕ້ອງປະຕິບັດ ຢ່າງໜ້ອຍໜຶ່ງເທື່ອຕໍ່ປີ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດກາເມື່ອຫາກເຫັນວ່າ ມີຄວາມຈຳເປັນ ໂດຍແຈ້ງໃຫ້ຮູ້ລ່ວງໜ້າກ່ອນ ຢ່າງໜ້ອຍ ຊາວສີ່ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນ ການກວດກາທີ່ມີການດຳເນີນ ຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ.

## ພາກທີ X
## ວັນຕ້ານເອດແຫ່ງຊາດ ແລະ ເຄື່ອງໝາຍຕ້ານເອດແຫ່ງຊາດ

### ມາດຕາ 61. ວັນຕ້ານເອດແຫ່ງຊາດ

ສປປ ລາວ ຖືເອົາວັນສາກົນຕ້ານເອດ ວັນທີ 1 ທັນວາ ຂອງທຸກປີ ເປັນວັນຕ້ານເອດແຫ່ງຊາດ ເພື່ອ ຊຸກຍູ້, ປຸກລະດົມ ຂະບວນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ດ້ວຍການເຄື່ອນໄຫວກິດຈະກຳຕ່າງໆ.

### ມາດຕາ 62. ເຄື່ອງໝາຍຕ້ານເອດແຫ່ງຊາດ

ສປປ ລາວ ຖືເອົາເຄື່ອງໝາຍຕ້ານເອດສາກົນ ເປັນເຄື່ອງໝາຍຕ້ານເອດແຫ່ງຊາດ, ເປັນຮູບໂບແດງເສັ້ນດຽວທີ່ໄຂວ່ກັນ ຊຶ່ງໝາຍເຖິງ ການດູແລເບິ່ງແຍງ ແລະ ການຊ່ວຍເຫລືອຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ແລະ ຜູ້ໄດ້ຮັບຜົນກະທົບ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 63. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການກັນພະຍາດ, ການປິ່ນປົວ, ການດູແລເບິ່ງແຍງ, ການຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີ ແລະ ຜູ້ເປັນພະຍາດເອດ, ການປະກອບສ່ວນທາງດ້ານ ທຶນຮອນ, ເຫື່ອແຮງ, ສະຕິປັນຍາ ເຂົ້າໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ຈະໄດ້ຮັບການຍ້ອງຍໍ, ບຳເນັດ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

### ມາດຕາ 64. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດ ກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 65. ມາດຕະການສຶກສາອົບຮົມ**

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ການລະເມີດຄຳແນະນຳຂອງແພດ, ການຈຳແນກ, ການລັງກຽດ ແລະ ການໝິ່ນປະໝາດ ຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ຫຼື ຜູ້ໄດ້ຮັບຜົນກະທົບ ຈາກພະຍາດເອດ ທີ່ມີລັກສະນະເບົາບາງ, ການບໍ່ໃຫ້ຄວາມຮ່ວມມືໃນການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ແລະ ອື່ນໆ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 66. ມາດຕະການທາງວິໄນ**

ພະນັກງານ, ລັດຖະກອນ ຫຼື ຜູ້ບໍລິການດ້ານການແພດ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບການສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ນອກຈາກຖືກສຶກສາອົບຮົມແລ້ວ ກໍຍັງຈະຖືກປະຕິບັດວິໄນ ດັ່ງນີ້:

1. ຕິຕຽນ, ກ່າວເຕືອນຄວາມຜິດ ແລະ ບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນທີ່ຕ່ຳກວ່າເກົ່າ;
4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 67. ມາດຕະການປັບໃໝ**

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ທີ່ໄດ້ຮັບການສຶກສາອົບຮົມ, ກ່າວເຕືອນ ຫຼື ຖືກປະຕິບັດວິໄນມາແລ້ວ ແຕ່ຫາກຍັງສືບຕໍ່ລະເມີດກົດໝາຍສະບັບນີ້ອີກເທື່ອໃໝ່ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝຕາມແຕ່ລະກໍລະນີ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 68. ມາດຕະການທາງແພ່ງ**

ບຸກຄົນ, ຄອບຄົວ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ຈະໄດ້ໃຊ້ແທນຄ່າເສຍຫາຍ ເປັນຕົ້ນ ຄ່າປິ່ນປົວ, ຄ່າປົວແປງຈິດໃຈ, ຄ່າປ່ວຍການ ຕາມລະບຽບກົດໝາຍ.

**ມາດຕາ 69. ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມກົດໝາຍອາຍາ.

ຜູ້ຕິດເຊື້ອເຮສໄອວີ, ຜູ້ເປັນພະຍາດເອດ ຫຼື ບຸກຄົນ ທີ່ນຳເອົາເຊື້ອເຮສໄອວີ ໄປແຜ່ຂະຫຍາຍໃຫ້ບຸກຄົນອື່ນໂດຍເຈດຕະນາ ຈະຖືວ່າເປັນການກະທຳຜິດທາງອາຍາ ແລະ ກໍຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດຫາກໄດ້ນຳເອົາເຊື້ອເຮສໄອວີ ໄປແຜ່ຂະຫຍາຍໃຫ້ບຸກຄົນອື່ນ ໂດຍເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ກໍຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝແຕ່ 50.000.000 ກີບ ຫາ 70.000.000 ກີບ.

# ພາກທີ XII
# ບົດບັນຍັດສຸດທ້າຍ

## ມາດຕາ 70. ການຈັດຕັ້ງປະຕິບັດ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

## ມາດຕາ 71. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງເກົ້າສິບວັນນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ທອງສິງ ທຳມະວົງ